german cooperation
DEUTSCHE ZUSAMMENARBEIT

Implemented by
Deutsche Gesellschaft für Internationale Zusammenarbeit (GIZ) GmbH

In cooperation with:
MEKONG RIVER COMMISSION FOR SUSTAINABLE DEVELOPMENT

# ການສະໜັບສະໜູນຄະນະກຳມາທິການແມ່ນ້ຳຂອງສາກົນ

## ການເຮັດວຽກຮ່ວມກັນ ເພື່ອພັດທະນາອ່າງແມ່ນ້ຳຂອງໃຫ້ຍືນຍົງ

### ຄວາມເປັນມາ

ພົນລະເມືອງຂອງ ຣາຊະອານາຈັກກຳປູເຈຍ, ສ.ປ.ປ ລາວ, ຣາຊະອານາຈັກໄທ ແລະ ສ.ສ ຫວຽດນາມ ຫຼາຍກວ່າ 70 ລ້ານຄົນ ແມ່ນອາໄສອ່າງແມ່ນ້ຳຂອງຕອນລຸ່ມ ເພື່ອການປະມົງ ແລະ ການກະສິກຳໃນການດຳລົງຊີວິດ. ເຖິງຢ່າງໃດກໍ່ຕາມ ການຈະເລີນເຕີບໂຕທາງດ້ານເສດຖະກິດຢ່າງໄວວາ ເປັນການເພີ່ມຄວາມກົດດັນຕໍ່ຊັບພະຍາກອນທາງນ້ຳ ແລະ ຊັບພະຍາກອນທຳມະຊາດໂດຍລວມ. ຄວາມສົມດູນລະຫວ່າງ ຄວາມຕ້ອງການທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມສາມາດເກີດຂຶ້ນໄດ້ໂດຍການຮ່ວມມືຂອງບັນດາປະເທດ ທີ່ຕັ້ງຢູ່ລຸ່ມແມ່ນ້ຳຂອງ. ດັ່ງນັ້ນ, ຄະນະກຳມາທິການແມ່ນ້ຳຂອງສາກົນຈຶ່ງໄດ້ຖືກສ້າງຕັ້ງຂຶ້ນໃນປີ 1995. ນັບຕັ້ງແຕ່ນັ້ນມາຄະນະກຳມາທິການແມ່ນ້ຳຂອງສາກົນ ໄດ້ມີການປັບປຸງຕະຫຼອດມາ ໃນຖານະເປັນອົງການຈັດຕັ້ງສາກົນຫຼັກເພື່ອຄຸ້ມຄອງຊັບພະຍາກອນນ້ຳດັ່ງກ່າວ. ເຖິງຢ່າງໃດກໍ່ຕາມ ໜ້າວຽກຂອງຄະນະກຳມາທິການສາກົນ ຈຳເປັນຕ້ອງໄດ້ຮັບການປັບປຸງບໍ່ວ່າຈະເປັນລະດັບຂັ້ນຂົງເຂດ ແລະ ຂັ້ນປະເທດ ເພື່ອປະເຊີນກັບຄວາມທ້າທາຍທີ່ກຳລັງເກີດຂຶ້ນ ຢູ່ໃນອ່າງແມ່ນ້ຳຂອງຕອນລຸ່ມ. ເຊິ່ງໄດ້ຮຽກຮ້ອງໃຫ້ມີການສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງພາຍໃນປະເທດ ແລະ ການຮ່ວມມືຢູ່ພາກພື້ນທີ່ແໜ້ນແຟ້ນກວ່າເກົ່າ. ແຜນງານການຮ່ວມມື ກ່ຽວກັບນ້ຳຂ້າມຊາຍແດນ ແມ່ນເນັ້ນໃສ່ການປັບປຸງການປະສານງານ ແລະ ຄວາມສາມາດໃນການຄຸ້ມຄອງຂອງຄະນະກຳມາທິການແມ່ນ້ຳຂອງສາກົນ, ໂດຍສະເພາະ ສະໜັບສະໜູນການຕິດຕາມກວດກາແມ່ນ້ຳ ແລະ ການຈັດຕັ້ງປະຕິບັດໂຄງການ ການຄຸ້ມຄອງໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງຮ່ວມກັນ.




*ການມອບ-ຮັບສະຖານີອຸທົກກະສາດ ແລະ ຕິດຕາມກວດກາຄູນນະພາບນ້ຳ ໃຫ້ລັດຖະບານ ສປປ ລາວ*
*ຮູບໂດຍ: © GIZ/ແຜນງານການຮ່ວມມືກ່ຽວກັບນ້ຳຂ້າມຊາຍແດນໃນລຸ່ມແມ່ນ້ຳຂອງ*

| | |
|---|---|
| ຊື່ໂຄງການ | ແຜນງານການຮ່ວມມືກ່ຽວກັບນ້ຳຂ້າມຊາຍແດນໃນລຸ່ມແມ່ນ້ຳຂອງໄລຍະ II |
| ໃຫ້ທຶນໂດຍ | ກະຊວງ ການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງສະຫະພັນສາທາລະນະລັດເຢຍລະມັນ (BMZ) |
| ເຂດເປົ້າໝາຍຂອງໂຄງການ | ຣາຊະອານາຈັກກຳປູເຈຍ, ສ.ປ.ປ ລາວ, ຣາຊະອານາຈັກໄທ, ສ.ສ ຫວຽດນາມ |
| ຜູ້ຮ່ວມງານໂຄງການ | ຄະນະກຳມາທິການແມ່ນ້ຳຂອງສາກົນ |
| ໄລຍະເວລາໂຄງການ | 2022 ຫາ 2024 |

### ຈຸດປະສົງ

ຄະນະກຳມາທິການແມ່ນ້ຳຂອງສາກົນ ໄດ້ກາຍມາເປັນອົງກອນທີ່ຕິດພັນ ແລະ ເປັນອົງກອນທີ່ມີປະສິດທິພາບ ໂດຍສະເພາະ ໃນວຽກງານການຮັບມືກັບຄວາມທ້າທ້າຍອັນເນື່ອງມາຈາກໂຄງການພັດທະນາທີ່ເກີດຂຶ້ນຕາມລ່ອງແມ່ນ້ຳຂອງຕອນລຸ່ມ ພາຍໃຕ້ຍຸກສະໄໝການປະເຊີນໜ້າກັບການປ່ຽນແປງດິນຟ້າອາກາດ.

### ວິທີດຳເນີນວຽກງານ

ໂຄງການດຳເນີນ ບັນດາກິດຈະກຳຂ້າງລຸ່ມນີ້:

- ໃຫ້ຄຳແນະນຳດ້ານວິຊາການ ໃຫ້ແກ່ຄະນະກຳມາທິການແມ່ນ້ຳຂອງສາກົນ ເພື່ອດຳເນີນວຽກງານການຕິດຕາມກວດກາອ່າງນ້ຳ ເຊິ່ງເປັນວຽກງານໜຶ່ງຂອງອົງກອນ ເພື່ອຕໍ່ໄປຈະໄດ້ ມີການກະຈາຍໜ້າວຽກຮັບຜິດຊອບ ແລະ ໜ້າວຽກຫຼັກເຫຼົ່ານີ້ໃຫ້ແກ່ບັນດາປະເທດຊະມາຊິກ.
- ໃຫ້ການຊ່ວຍເຫຼືອກະກຽມບົດສະເໜີໂຄງການ ການພັດທະນານ້ຳ ແລະ ການຄຸ້ມຄອງອ່າງຍ່ອຍ ຂ້າມຊາຍແດນລະຫວ່າງ ຣາຊະອານາຈັກກຳປູເຈຍ ແລະ ຣາຊະອານາຈັກໄທ ເພື່ອຊອກທຶນ ມາຈັດຕັ້ງປະຕິບັດແຜນແມ່ບົດຄຸ້ມຄອງໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ລວມທັງລະບົບເຕືອນໄພລ່ວງໜ້າຮ່ວມກັນ.
- ຊຸກຍູ້ການປັບປຸງລະບົບຄຸ້ມຄອງພາຍໃນຂອງກອງເລຂາ ຄະນະກຳມາທິການສາກົນ ດ້ວຍການສະໜັບສະໜູນການຈັດຕັ້ງປະຕິບັດ ແຜນຍຸດທະສາດຂອງຄະນະກຳມາທິການແມ່ນ້ຳຂອງ 2021-2025. ເຊິ່ງລວມທັງການໃຫ້ຄຳແນະນຳດ້ານຊິຊາການກ່ຽວກັບກົນໄກການຈັດຕັ້ງປະຕິບັດ ໃຫ້ໄປຕາມລະບຽບຂໍ້ກຳນົດຕ່າງໆ, ຕົວຢ່າງ: ການຄຸ້ມຄອງການເງິນພາຍໃນ ແລະ ການນຳໃຊ້ທຶນຈາກຄູ່ຮ່ວມສັນຍາສອງຝ່າຍ, ຜູ້ໃຫ້ທຶນສາກົນ ແລະ ທຶນສົມທົບຈາກບັນດາປະເທດສະມາຊິກ ໃຫ້ມີປະສິດທິພາບ.

## ສິ່ງທີ່ພວກເຮົາບັນລຸ

ໂດຍການສະໜັບສະໜູນຂອງ ສະຫະພັນສາທາລະນະລັດ ເຢຍລະມັນ, ຄະນະກຳມາທິການແມ່ນ້ຳຂອງສາກົນ ໄດ້ປະກອບສ່ວນເຂົ້າໃນການປັບປຸງຄວາມຮູ້ ດ້ານຊັບພະຍາກອນນ້ຳຂອງປະເທດສະມາຊິກ, ຊ່ວຍສ້າງວິໄສທັດຮ່ວມ ແລະ ປັບປຸງກົນໄກການຮ່ວມມືຂອງປະເທດສະມາຊິກ. ການມີສ່ວນຮ່ວມແບບນີ້ ເຮັດໃຫ້ຄະນະກຳມາທິການແມ່ນ້ຳຂອງສາກົນ ກາຍເປັນອົງກອນທີ່ມີປະສິດທິພາບ ແລະ ກຳລັງກ້າວຂຶ້ນໄປເປັນອົງກອນນຳໜ້າຂອງໂລກ ທາງດ້ານການຮ່ວມມື ກ່ຽວກັບນ້ຳຂ້າມຊາຍແດນ ທີ່ໄດ້ຮັບການສະໜັບສະໜູນທັງທາງດ້ານການເມືອງ ແລະ ທຶນໃຫ້ນັບມື້ນັບຫຼາຍຂຶ້ນ.

ປັດຈຸບັນນີ້ ທາງໂຄງການໄດ້ຮັບຜົນສຳເລັດ ແລະ ມີຄວາມຄືບໜ້າດັ່ງນີ້:

- ຜົນໄດ້ຮັບຂອງໂຄງການຕົວແບບ ຈາກແຜນງານ ຕິດຕາມກວດກາສິ່ງແວດລ້ອມແບບຮ່ວມມື ກຳລັງຖືກເຊື່ອມສານ ເຂົ້າໃນເຄືອຂ່າຍຕິດຕາມກວດກາແມ່ນ້ຳສາຍຫຼັກ ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ ເຊິ່ງລວມທັງແມ່ນ້ຳຂອງ ແລະ ແມ່ນ້ຳທີ່ເປັນສາຂາຫຼັກ ລວມທັງການຕິດຕາມກວດກາເສດຖະກິດສັງຄົມເຊິ່ງໃນນັ້ນໜ້າທີ່ຮັບຜິດຊອບຫຼັກໄດ້ຖືກກະຈາຍສິ່ງຕໍ່ໃຫ້ບັນດາປະເທດສະມາຊິກ.
- ແຜນແມ່ບົດ ການຮ່ວມມືກັນຂອງອ່າງຮັບນ້ຳ ຕົງເລສາບ, ແຜນດັ່ງກ່າວໄດ້ຖືກຮັບຮອງໂດຍ ຄະນະກຳມາທິການຮ່ວມ ຂອງຣາຊະອານາຈັກກຳປູເຈຍ ແລະ ຣາຊະອານາຈັກໄທ.
- ເຮັດສຳເລັດສ້າງລະບົບແຜນທີ່ ອ່າງຮັບນ້ຳ ຕົງເລສາບ ແລະ ລະບົບສາມາດນຳໃຊ້ໄດ້ແລ້ວ ເພື່ອສ້າງລະບົບເຕືອນໄພລ່ວງໜ້າ.
- ຊ່ວຍສົ່ງເສີມໃຫ້ນຳໃຊ້ລະບົບການຕິດຕາມກວດກາ ແລະ ປະເມີນຜົນຂອງຄະນະກຳມາທິການແມ່ນ້ຳຂອງສາກົນເພື່ອລາຍງານ ຂຶ້ນງົບປະມານ ແລະ ວາງແຜນ.



*ບຶງຢູ່ ຣາຊະອານາຈັກ ກຳປູເຈຍ*
*ຮູບໂດຍ: © GIZ/ແຜນງານການຮ່ວມມືກ່ຽວກັບນ້ຳຂ້າມຊາຍແດນໃນລຸ່ມແມ່ນ້ຳຂອງ*

## ບົດບາດຍິງ - ຊາຍ ແລະ ການຄຸ້ມຄອງຊັບພະຍາກອນນ້ຳ

ຍຸດທະສາດສົ່ງເສີມບົດບາດຍິງ - ຊາຍ ເພື່ອນຳໃຊ້ເຂົ້າໃນວຽກງານ ເຄືອຂ່າຍຕິດຕາມກວດກາແມ່ນ້ຳສາຍຫຼັກ ກຳລັງຢູ່ໃນຂັ້ນຕອນການສ້າງ ແລະ ຄາດວ່າຈະສາມາດນຳໃຊ້ຍຸດທະສາດດັ່ງກ່າວພາຍໃນປີ 2023. ທາງໂຄງການຍັງໄດ້ສະໜັບສະໜູນການປະເມີນຜົນກະທົບ ຕໍ່ກັບທຸກເພດທຸກໄວ ແລະ ຄວາມບອບບາງຂອງພວກເຂົາຢູ່ໃນຂົງເຂດອ່າງຍ່ອຍ ລວມທັງ ຊ່ວຍໃນການຈັດຕັ້ງປະຕິບັດແຜນດຳເນີນງານບົດບາດ ຍິງ - ຊາຍ ຂອງຄະນະກຳມາທິການແມ່ນ້ຳຂອງສາກົນ. ບົດບາດຍິງ - ຊາຍ ແລະ ການຄຸ້ມຄອງຊັບພະຍາກອນນ້ຳ



*ຊ່ຽວຊານຜ່າຕັດປາທີ່ເປັນແມ່ຍິງລາວ ທີ່ເຮັດວຽກກ່ຽວກັບການຕິດຕາມກວດກາການເຄື່ອນຍ້າຍຂອງປາ*
*ຮູບໂດຍ: © GIZ/ແຜນງານການຮ່ວມມືກ່ຽວກັບນ້ຳຂ້າມຊາຍແດນໃນລຸ່ມແມ່ນ້ຳຂອງ*

### ກ່ຽວກັບ GIZ

ການບໍລິການຂອງ GIZ ແມ່ນອີງໃສ່ຄວາມຊ່ຽວຊານໃນລະດັບພາກພື້ນ ແລະ ຄວາມຊຳນານດ້ານວິຊາການ ພ້ອມທັງຄວາມຮູ້ດ້ານການຄຸ້ມຄອງບໍລິຫານ ທີ່ໄດ້ຜ່ານການທົດລອງ ແລະ ທົດສອບມາແລ້ວ. ໃນນາມເປັນວິສາຫະກິດຂອງລັດ, ພວກເຮົາຊ່ວຍ ລັດຖະບານເຢຍລະມັນ ໃຫ້ບັນລຸຈຸດປະສົງໃນຂົງເຂດ ການຮ່ວມມືສາກົນເພື່ອການພັດທະນາແບບຍືນຍົງ.

ກະລຸນາເຂົ້າເບິ່ງໃນເວັບໄຊທ໌ຂອງພວກເຮົາ www.giz.de ສຳລັບຂໍ້ມູນເພີ່ມເຕີມ ກ່ຽວກັບ ວຽກງານຂອງ GIZ ໃນອາຊີ ແລະ ທົ່ວໂລກ.


ຈັດພິມໂດຍ
Deutsche Gesellschaft für
Internationale Zusammenarbeit (GIZ) GmbH

ສຳນັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ

ໂຄງການ ການຮ່ວມມືທາງດ້ານຊັບພະຍາກອນນ້ຳຂ້າມຊາຍແດນ

ຕູ້ ປ.ນ. 9233
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 263 263 ext. 3061
ແຟັກ: +856 21 312 408
ອີເມວ: mrc@giz.de

www.giz.de/laos (EN); www.giz.de/laos-la (LA)

ລົງວັນທີ ຕຸລາ 2022

ອອກແບບໂດຍ ພະແນກປະຊາສຳພັນ ຫ້ອງການ GIZ ປະຈຳລາວ, ນະຄອນຫຼວງວຽງຈັນ

ຮູບຖ່າຍໂດຍ GIZ/ແຜນງານການຮ່ວມມືກ່ຽວກັບນ້ຳຂ້າມຊາຍແດນໃນລຸ່ມແມ່ນ້ຳຂອງ

ຂຽນໂດຍ ເຢຍ ຢ່າງ

ບຸກຄົນຕິດຕໍ່ ບາບາຣາ ສໄວເກີ

GIZ ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ

ໃນນາມຂອງ ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (BMZ)